**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ ລັດວິສາຫະກິດ ລາວເດີນອາກາດ — ເລກທີ : 310/ລດອ.

ໂຮງແຮມລາວສະກາຍເວ — ນະຄອນຫຼວງວຽງຈັນ, ວັນທີ : 23 APR 2019

# ໜັງສືເຊີນປະມູນ

**ເຖິງ :** ບັນດາ ບໍລິສັດ ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ.

**ເລື່ອງ :** ເຊີນຮ່ວມຍື່ນຊອງປະມູນ ໂຄງການ ປັບປຸງ, ສ້ອມແປງ ແລະ ກໍ່ສ້າງ ອາຄານ 2 ຊັ້ນ, ສະໂມສອນ 1 ຫລັງ ຂອງ ໂຮງແຮມລາວສະກາຍເວ ຊຽງຂວາງ.

- ອີງຕາມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ລັດວິສາຫະກິດ ລາວເດີນອາກາດ ສະບັບເລກທີ 0149/ກງ, ລົງວັນທີ 24/1/2002, ແຕ່ງຕັ້ງຜູ້ອຳນວຍການໃຫຍ່ ສະບັບເລກທີ 3930/ ກງ, ລົງວັນທີ 05 ທັນວາ 2018.
- ອີງຕາມແຜນການປັບປຸງ, ສ້ອມແປງ ແລະ ກໍ່ສ້າງ ອາຄານ 2 ຊັ້ນ, ສະໂມສອນ 1ຫລັງ ຂອງ ໂຮງແຮມລາວສະກາຍເວ ຊຽງຂວາງ ແລະ ໄດ້ການຮັບຮອງ ຈາກສະພາບໍລິຫານ ບໍລິສັດ ລັດວິສາຫະກິດ ລາວເດີນອາກາດ ຄັ້ງວັນທີ 21/2/2018.
- ອີງຕາມດຳລັດ ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການດ້ວຍທຶນ ຂອງ ລັດ ສະບັບເລກທີ 0063/ກງ, ລົງວັນທີ 12 ມີນາ 2004.

ໂຮງແຮມລາວສະກາຍເວ ຊຽງຂວາງ, ບໍລິສັດ ລັດວິສາຫະກິດ ລາວເດີນອາກາດ ຂໍຖືເປັນກຽດຢ່າງສູງ ຮຽນມາຍັງ ບັນດາ ບໍລິສັດ ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ ທີ່ມີຈຸດປະສົງ ຢາກປະມູນກໍ່ສ້າງໂຄງການຂ້າງເທິງ ຍື່ນຊອງປະມູນຮັບເໝົາກໍ່ສ້າງ ລະອຽດດັ່ງນີ້:

**I. <u>ແບບອາຄານທີ່ຕ້ອງການດຳເນີນການປະມູນຮັບເໝົາປັບປຸງ, ສ້ອມແປງ ແລະ ກໍ່ສ້າງ</u>:**

1. **ອາຄານ 2ຊັ້ນ ໂຮງແຮມລາວສະກາຍເວ.**
2. **ສະໂມສອນ 1ຫລັງ**

ຕາມ ແບບລະອຽດໄດ້ຄັດຕິດມາພ້ອມນີ້.

**II. <u>ເງື່ອນໄຂບໍລິສັດ ຍື່ນຊອງປະມູນຮັບເໝົາປັບປຸງ, ກໍ່ສ້າງ ແລະ ສ້ອມແປງ</u>:**

1. ໃບທະບຽນວິສາຫະກິດ, ໃບທະບຽນອາກອນ,ໃບທະບຽນວິຊາສະເພາະການກໍ່ສ້າງ ຍັງມີກຳນົດ ນຳໃຊ້ໄດ້ຕໍ່ເນື່ອງ.
2. ມີທຶນເປັນຂອງ ບໍລິສັດເອງ ສາມາດສະໜອງພຽງພໍໃຫ້ການກໍ່ສ້າງດຳເນີນການຕໍ່ເນື່ອງ ແລະ ທັນກຳນົດເວລາ ຕາມສັນຍາກໍ່ສ້າງກຳນົດ.
3. ບໍລິສັດໄດ້ດຳເນີນທຸລະກິດການກໍ່ສ້າງມາແລ້ວຢ່າງໜ້ອຍ 3 ປີຂຶ້ນໄປ ແລະ ມີຜົນສຳເລັດຕົວຈິງມາແລ້ວຢ່າງໜ້ອຍ 5 ລາຍການຂຶ້ນໄປ.
4. ມີໃບຢັ້ງຢືນຖານະການເງິນ (Bank Statement) 01 ປີ ຍ້ອນຫຼັງ ຮອດວັນທີ 30/04/2019.

**III. <u>ເອກະສານຍື່ນປະມູນ</u>:**

1. ປະຫວັດບໍລິສັດ Company Profile.
2. ສຳເນົາສີ ໃບທະບຽນວິສາຫະກິດ, ໃບທະບຽນອາກອນ, ໃບທະບຽນວິຊາສະເພາະການກໍ່ສ້າງ ຍັງມີກຳນົດ ນຳໃຊ້

ໄດ້, ແນວລະ 1 ສະບັບ.

3. ໃບສະເໜີລາຄາປະມູນຮັບເໝົາກໍ່ສ້າງລະອຽດ 1 ສະບັບ.

4. ມີໃບຢັ້ງຢືນຖານະການເງິນ (Bank Statement) 01 ປີ ຍ້ອນຫຼັງ ຮອດວັນທີ 30/04/2019.

IV. <u>ກຳນົດເປີດຊອງປະມູນ</u>:

➢ **ວັນທີ 23 / 05 / 2019.**

- ເວລາ 8:30-9:00 ໂມງ ລົງທະບຽນປະຊຸມ.
- ເວລາ 9:00 ໂມງ ເປີດຊອງປະມູນ.
- ສະຖານທີ່ເປີດຊອງປະມູນ ທີ່ຫ້ອງປະຊຸມ ຊັ້ນ 1 ໂຮງແຮມລາວສະກາຍເວ ຊຽງຂວາງ, ຖະໜົນວົງວິຈິດ, ເມືອງແປກ, ແຂວງ ຊຽງຂວາງ.
- ພາຍຫຼັງສຳເລັດເປີດຊອງປະມູນແລ້ວ, ຄະນະກຳມະການຮັບຜິດຊອບປະມູນ ຈະປະຊຸມສະຫຼຸບຜົນ ຂອງການປະມູນ ແລະ ແຈ້ງຜູ້ຊະນະໃຫ້ ຜູ້ເຂົ້າຮ່ວມປະມູນຊາບ ໃນເວລາ 30 ນາທີ.

**V. <u>ການຈັດຊື້ຊອງປະມູນ ແລະ ການຍື່ນຈົດໝາຍແຈ້ງເຈດຈຳນົງເຂົ້າຮ່ວມປະມູນ</u>:**

**1. <u>ການຈັດຊື້ຊອງປະມູນ</u>:**

– ສະຖານທີ່ຊື້ຊອງປະມູນ(ບ່ອນຂາຍຊອງປະມູນ)

1) ຊື້ຢູ່ໂຮງແຮມ ລາວສະກາຍເວ, ຊຽງຂວາງ, ຖະໜົນວົງວິຈິດ, ເມືອງແປກ, ແຂວງຊຽງຂວາງ ຊັ້ນ 1 ຫ້ອງການຮັບຕ້ອນ(ວັນຈັນ-ວັນສຸກ) ໃນໂມງລັດຖະການ, ສອບຖາມຂໍ້ມູນເພີ່ມເຕີມທີ່ເບີ 030 944 0063 ໃນໂມງລັດຖະການ(8:30-16:00ໂມງ).

2) ຊື້ຢູ່ໂຮງແຮມລາວສະກາຍເວ, ວຽງຈັນ ຖະໜົນອາຊຽນ, ບ້ານວັດໄຕໃຫຍ່ທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ຫ້ອງເລຂານຸການ ຊັ້ນ 3, ຫ້ອງ 311 (ວັນຈັນ-ວັນສຸກ) ໃນໂມງລັດຖະການ(8:30-16:00ໂມງ), ໂທ: 021 512 027.

– ລາຄາຊື້ຊອງປະມູນ **1.500.000** ກີບ/ຊອງ. ຊື້ໄດ້ ນັບແຕ່ວັນທີ 01 / 05 / 2019 ເຖິງ 15 / 05 / 2019.

**2. <u>ການຍື່ນຈົດໝາຍແຈ້ງເຈດຈຳນົງເຂົ້າຮ່ວມປະມູນ(ຍື່ນຊອງປະມູນຄົບຊຸດ).</u>**

ບໍລິສັດ ທີ່ຕ້ອງການເຂົ້າຮ່ວມປະມູນ ຕ້ອງຍື່ນຈົດໝາຍແຈ້ງເຈດຈຳນົງເຂົ້າຮ່ວມປະມູນ(ຍື່ນຊອງປະມູນ):

- ທີ່ໂຮງແຮມລາວສະກາຍເວ ວຽງຈັນ, ບໍລິສັດ ລັດວິສາຫະກິດ ລາວເດີນອາກາດ, ຫ້ອງເລຂານຸການ ຊັ້ນ 3, ຫ້ອງ 311 ບໍ່ໃຫ້ກາຍວັນທີ 20 / 05 / 2019.
- ທີ່ໂຮງແຮມລາວສະກາຍເວ ຊຽງຂວາງ ຊັ້ນ 1 ຫ້ອງການຮັບຕ້ອນ ບໍ່ໃຫ້ກາຍ 1ຊົ່ວໂມງ ກ່ອນເປີດກອງປະຊຸມເປີດຊອງປະມູນ ຂອງວັນທີ 23 / 05 / 2019.

ດັ່ງນັ້ນ, ຈຶ່ງອອກໜັງສືເຊີນປະມູນສະບັບນີ້ ມາຍັງ ບໍລິສັດ ກໍ່ສ້າງ ແລະ ສ້ອມແປງເຄຫາສະຖານ ທີ່ມີຈຸດປະສົງຮັບເໝົາກໍ່ສ້າງຮັບຊາບ ແລະ ເຂົ້າຮ່ວມປະມູນຄັ້ງນີ້ຕາມທາງຄວນດ້ວຍ.

**ຜູ້ອຳນວຍການໃຫຍ່**

ບໍລິສັດ ລັດວິສາຫະກິດ ລາວເດີນອາກາດ Lao Skyway

ສີວຽງທອງ ກອນນີວິຈິ